**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 6 ເມສາ 2025 (04-06-2025)

---

**ໝາຍສຳຄັນແຫ່ງແສງສວ່າງຂອງພຣະອົງ**

**ຈຸດສຳຄັນໃນບົດຮຽນ:** ມີພຽງແຕ່ຜ່ານອົງພຣະເຢຊູເທົ່ານັ້ນທີ່ພວກເຮົາສາມາດເຫັນໄດ້ຢ່າງແທ້ຈິງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຄໂລດ ໂມເນັດ(Claude Monet), ນັກແຕ້ມຮູບຕົ້ນສະຕະວັດທີ 20, ຖືວ່າເປັນຜູ້ກໍ່ຕັ້ງຂະບວນການສິນລະປະຂອງຝຣັ່ງເສດແລະມີອິດທິພົນຢ່າງຫຼວງຫຼາຍຕໍ່ສິນລະປະ. ສິ່ງທີ່ພວກເຮົາບໍ່ຄ່ອຍໄດ້ຍິນແມ່ນວິທີການທີ່ ໂມເນັດ ມີຄວາມບົກຜ່ອງທາງດ້ານສາຍຕາທີ່ນຳລາວໄປສູ່ການຕາບອດໃນທີ່ສຸດ. ດຽວນີ້, ໃນຂະນະທີ່ພວກເຮົາບໍ່ຮູ້ຂອບເຂດທີ່ແນ່ນອນຂອງການຕາບອດຂອງລາວ, ພວກເຮົາຮູ້ວ່າລາວບໍ່ໄດ້ປ່ອຍໃຫ້ມັນຢຸດລາວ. ໃນຄວາມເປັນຈິງ, ໂມເນັດ ສືບຕໍ່ແຕ້ມບາງວຽກງານທີ່ໄດ້ຮັບກຽດທີ່ສຸດຂອງລາວຫລັງຈາກການສູນເສັຽສາຍຕາຂອງລາວ. ມີບາງຄົນທີ່ເບິ່ງຄວາມພິການວ່າເປັນອຸປະສັກ. ຫຼັງຈາກນັ້ນ, ມີບາງຄົນທີ່ເຫັນວ່າມັນເປັນພຽງແຕ່ປະສົບການໂລກທີ່ແຕກຕ່າງກັນ. ໃນບົດຮຽນມື້ນີ້, ພວກເຮົາຈະມາຮຽນຮູ້ກ່ຽວກັບຜູ້ຊາຍຕາບອດຄົນນຶ່ງທີ່ຖືກຂັດຂວາງບໍ່ແມ່ນໂດຍຕົນເອງແຕ່ໂດຍສັງຄົມທີ່ລາວອາສັຍຢູ່ໃນນັ້ນ. ເຖິງຢ່າງນັ້ນກໍ່ຕາມ, ພຣະເຢຊູຈະຊົງໃຊ້ຄວາມພິການຂອງຊາຍຄົນນີ້ເພື່ອສະແດງສະພາບທີ່ເລິກເຊິ່ງກວ່ານັ້ນບໍ່ແມ່ນຂອງຊາຍຄົນນີ້, ແຕ່ແມ່ນຂອງສັງຄົມທີ່ຢູ່ອ້ອມຂ້າງລາວ. ແນ່ນອນ, ຄວາມຕາບອດທີ່ແທ້ຈິງເກີດຂື້ນເມື່ອພວກເຮົາມອງຂ້າມໄປວ່າອົງພຣະເຢຊູຊົງແມ່ນໃຜແທ້ໆ.

*ເມື່ອໃດທີ່ທ່ານເຫັນຜູ້ໃດຜູ້ນຶ່ງປະສົບຄວາມສຳເລັດ ເຖິງວ່າຈະມີສິ່ງທີ່ຄົນອື່ນເອີ້ນວ່າຂໍ້ຈຳກັດ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**ການສຶກສາພຣະຄັມພີ**

## 1. ໂຢຮັນ 9:1-5

*1 ເມື່ອພຣະເຢຊູກຳລັງສະເດັດໄປຊົງເຫັນຊາຍຄົນນຶ່ງຕາບອດມາແຕ່ກຳເນີດ. 2 ພວກສາວົກຂອງພຣະອົງທູນຖາມພຣະອົງວ່າ,*
*"ພຣະອາຈານເອີຍ, ຜູ້ໃດໄດ້ເຮັດຜິດບາບ ຄົນນີ້ຫຼືພໍ່ແມ່ຂອງຕົນລາວຈຶ່ງເກີດມາຕາບອດ" 3 ພຣະເຢຊູຊົງຕອບວ່າ, "ບໍ່ແມ່ນຄົນນີ້ຫຼືພໍ່*
*ແມ່ຂອງຕົນໄດ້ເຮັດບາບ ແຕ່ເກີດມາເພື່ອໃຫ້ພຣະຣາຊກິດຂອງພຣະເຈົ້າປາກົດໃນຕົວຄົນນີ້. 4 ເມື່ອຍັງເວັນຢູ່ ເຮົາທັງຫຼາຍຕ້ອງເຮັດ*
*ພຣະຣາຊກິດຂອງພຣະອົງຜູ້ຊົງໃຊ້ເຮົາມາ ເວລາກາງຄືນກໍຈະໄດ້ມາເຖິງ ຄືເວລາທີ່ບໍ່ມີຜູ້ໃດອາດເຮັດການໄດ້. 5 ຕາບໃດເຮົາຍັງຢູ່*
*ໃນໂລກເຮົາກໍເປັນຄວາມສວ່າງຂອງໂລກ."*

*ການທີ່ພຣະເຢຊູຊົງປະກາດພຣະອົງເອງວ່າເປັນແສງສວ່າງຂອງໂລກນັ້ນ ໝາຍຄວາມວ່າແນວໃດ?*

ຂໍ້ຄວາມນີ້ເລີ້ມຕົ້ນດ້ວຍອົງພຣະເຢຊູກຳລັງຍ່າງໄປກັບບັນດາເຫຼົ່າສາວົກຂອງພຣະອົງພ້ອມກັບຊາຍຄົນນຶ່ງທີ່ຕາບອດມາແຕ່ກຳເນີດ (ຂໍ້ 1). ໃນສະຕະວັດທີ 1, ບໍ່ໄດ້ມີການບໍຣິການສັງຄົມສົງເຄາະຮັບໃຊ້ຄົນຕາບອດ, ຊາຍຄົນນີ້ບໍ່ສາມາດເຮັດວຽກເໝືອນບັນດາຄົນອື່ນໆ. ສະນັ້ນ, ລາວຈຶ່ງໄດ້ຖືກປ່ອຍຊີວິດໃຫ້ເປັນຂໍທານເພື່ອຄວາມຢູ່ລອດດ້ານເສຖກິດ. ບັນດາເຫຼົ່າສາວົກຈຶ່ງໄດ້ຖາມຄຳຖາມທີ່ກ່ຽວຂ້ອງກັບພຣະເຢຊູກ່ຽວກັບເຣື່ອງນີ້ໂດຍສະເພາະວ່າ: "ພຣະອາຈານ, ແມ່ນຜູ້ໃດເຮັດບາບ ຊາຍຄົນນີ້ຫຼືພໍ່ແມ່ຂອງລາວ ລາວຈຶ່ງໄດ້ເກີດມາຕາບອດ?" (ຂໍ້ 2). ເວົ້າອີກຢ່າງນຶ່ງ, "ພຣະເຢຊູເຈົ້າ, ເຮົາຈະຖິ້ມໂທດໃຫ້ຜູ້ໃດທີ່ເປັນເຫດການເສັຽອົງຄະນີ້?" ກັບຄືນສູ່ຄວາມຄິດຂອງສະຕະວັດທີ 1, ຊາວຢິວເຊື່ອວ່າຄວາມພິການໃດໆກໍ່ຕາມແມ່ນເປັນການລົງໂທດຂອງບາບ. ບາງທີພວກເພິ່ນອາດຄິດເຖິງພຣະ

ຄັມພີທີ່ອ້າງເຖິງວິທີການສາບແຊ່ງຂອງບາບຈະຖືກສົ່ງຕໍ່ໄປສູ່ຄົນລຸ້ນຫຼັງຕໍ່ໄປ (ອພຍ 20:5; ພບຍ 2 28:15). ແນວໃດກໍ່ຕາມ, ພຣະເຢຊູໄດ້ຊົງບອກຢ່າງຈະແຈ້ງວ່າການຕີຄວາມໝາຍຂອງເຂົາເຈົ້າຜິດພາດ. ຈົນເຖິງທຸກມື້ນີ້, ຫຼາຍຄົນຕໍ່ສູ້ກັບເຫດຜົນທີ່ພຣະເຈົ້າຊົງອະນຸຍາດໃຫ້ບາງຄົນເກີດມາມີຄວາມພິການແລະຄວາມບໍ່ສົມບູນແບບໃນຂນະທີ່ບາງຄົນບໍ່ເປັນດັ່ງນັ້ນ. ຄວາມຈິງແລ້ວກໍແມ່ນຍ້ອນຄວາມບາບ, ໂລກນີ້ບໍ່ແມ່ນສິ່ງທີ່ສົມບູນແບບທີ່ພຣະເຈົ້າໄດ້ຊົງອອກແບບໄວ້. ພວກເຮົາທັງໝົດມີປະສົບການ "ຄວາມພິການ" ຕາມບາງສ່ວນຂອງຂອບເຂດ. ຮ່າງກາຍຂອງພວກເຮົາບໍ່ສົມບູບແບບ, ແມ້ວ່າພວກເຮົາຈະພຍາຍາມໃຫ້ມັນສົມບູນແບບຫຼາຍປານໃດກໍ່ຕາມ. ພວກເຮົາທຸກຄົນຈະຜະເຊີນກັບຄວາມແນ່ນອນຂອງການເສັຽຊີວິດ. ເຖິງຢ່າງໃດກໍ່ຕາມ, ຍັງມີບາງຄົນທີ່ພຣະເຈົ້າຊົງອະນຸຍາດໃຫ້ເກີດມາມີຄວາມພິການທາງດ້ານຮ່າງກາຍຫຼາຍກວ່າຄົນອື່ນໆ. ພຣະເຢຊູຊົງແກ້ໄຂທັສນະຄະຕິສະແດງອອກທັນທີກ່ຽວກັບຈຸດປະສົງຂອງການຕາບອດຂອງຊາຍຄົນນີ້. ມັນບໍ່ແມ່ນເຫດຜົນມາຈາກບາບ ແຕ່ເພື່ອພຣະຣາຊກິດຂອງພຣະເຈົ້າ(ຂໍ້ 3). ຄໍາສອນນີ້ອາດຍາກທີ່ຈະຍອມຮັບເມື່ອພວກເຮົາພິຈາຣະນາເຖິງເຫດຜົນວ່າເປັນຫຍັງ, ແຕ່ມັນເປັນສິ່ງຈໍາເປັນທີ່ຈະເຂົ້າໃຈພຣະລັກສນະທີ່ແທ້ຈິງຂອງອົງພຣະເຢຊູຄຣິດ ແລະວິທີການທີ່ວຽກງານຂອງພຣະອົງຊີ້ໃຫ້ເຫັນວ່າພຣະອົງຊົງແມ່ນໃຜ. ຄວາມຕາບອດທີ່ແທ້ຈິງແລະບັນຫາທີ່ຮ້າຍແຮງກວ່ານັ້ນແມ່ນກ່ຽວກັບຜູ້ທີ່ບໍ່ສາມາດເຫັນຈຸດປະສົງຂອງພຣະຄໍາຂອງພຣະເຈົ້າໃນບັນດາພວກເຂົາເຈົ້າ(ຂໍ້ 4). ຍິ່ງໄປກວ່ານັ້ນ, ຕາບອດອັນໃຫຍ່ຫຼວງທີ່ມີຢູ່ໃນທຸກມື້ນີ້ແມ່ນມາຈາກຜູ້ທີ່ເຊື່ອວ່າ: ໂດຍການມີຄວາມພິການ, ເຂົາເຈົ້າໄດ້ຖືກຍົກເວັ້ນຫຼືຂັດຂວາງຈາກການໄດ້ຮັບພຣະພອນຈາກພຣະເຈົ້າ. ໂປໂລໄດ້ເບິ່ງຄວາມອ່ອນແອຂອງຕົນເອງວ່າເປັນເຫດຜົນທີ່ຈະອວດອ້າງແລະສັນຣະເສີນພຣະເຈົ້າຫຼາຍກວ່າເກົ່າ (2 ກຣທ 12:9-10). ແທ້ຈິງແລ້ວ, ການທີ່ລາວໄດ້ເຫັນ "ໜາມໃນເນື້ອໜັງ" (ຂໍ້ 7) ຂອງຕົນເອງກໍ່ເຮັດໃຫ້ລາວມີຄວາມເຂັ້ມແຂງໃນອົງພຣະຜູ້ເປັນເຈົ້າຫຼາຍຂຶ້ນ. ຈຸດສຸດຍອດຂອງການສົນທະນາໃນຂໍ້ພຣະຄັມພີເຫຼົ່ານີ້ເຊື່ອມຕໍ່ສອງຄໍານີ້: **"ເຮົາເປັນ"** ຂອງພຣະເຢຊູທີ່ເນັ້ນໜັກວ່າພຣະອົງຊົງເປັນແສງສວ່າງຂອງໂລກ. ໃນພຣະຄັມພີ ໂຢຮັນ ບົດທີ່ 8, ພຣະເຢຊູຊົງໄດ້ພົວພັນກັບບັນດາພວກຟາຣີຊາຍ, ຜູ້ທີ່ຕັ້ງຄໍາຖາມກ່ຽວກັບຣິດອໍານາດແລະຄວາມເປັນພຣະເຈົ້າຂອງພຣະອົງ. ໃນບົດທີ່ 9, ພຣະອົງຊົງໄດ້ສະແດງແກ່ບັນດາພວກສາວົກໃຫ້ເຫັນຄວາມຮີບດ່ວນທີ່ຈໍາເປັນໃນການທີ່ພຣະເຢຊູຈະຊົງເປີດເຜີຍພຣະອົງເອງໃນຖານະ<u>ແສງສວ່າງຂອງໂລກ</u>, ເພາະວ່າພຣະອົງຊົງສາມາດເຫັນໄດ້ວ່າວັນເວລາກໍາລັງຈະມາເຖິງໃນໄວໆນີ້ເມື່ອພຣະຣາຊກິດຕ່າງໆເທິງແຜ່ນດິນໂລກຂອງພຣະອົງຈະສໍາເລັດ. ແລະພວກມັນຈໍາເປັນຈະຕ້ອງສະທ້ອນພຣະຣັສມີ(ແສງສວ່າງ)ຂອງພຣະອົງ.

*ພຣະເຢຊູຊົງປະກາດວ່າ ພຣະອົງຊົງເປັນແສງສວ່າງຂອງໂລກ ນັ້ນໝາຍຄວາມວ່າແນວໃດ?*

## 2. <u>ໂຢຮັນ 9:6-11</u>

*6 ເມື່ອຊົງກ່າວດັ່ງນັ້ນແລ້ວພຣະອົງຊົງຖົ່ມນໍ້າລາຍລົງດິນ ແລະຊົງເຮັດໃຫ້ດິນເປັນຕົມດ້ວຍນໍ້າລາຍນັ້ນ ແລ້ວຊົງເອົາຕົມນັ້ນທາຕາ*
*ຂອງຄົນຕາບອດ, 7 ກັບທັງຊົງກ່າວຕໍ່ຄົນນັ້ນວ່າ, "ຈົ່ງໄປລ້າງເສັຽທີ່ສະຊີໂລອາມ" (ຊຶ່ງແປວ່າໃຊ້ໄປ) ລາວຈຶ່ງໄປລ້າງແລ້ວກັບມາກໍ*
*ເຫັນຮຸ່ງໄດ້. 8 ເຫດສັນນັ້ນພວກຄົນໃກ້ຄຽງ ແລະຄົນທີ່ເຄີຍເຫັນລາວເປັນຄົນຂໍທານຢູ່ແຕ່ກ່ອນຈຶ່ງເວົ້າກັນວ່າ, "ຜູ້ນີ້ບໍ່ແມ່ນຄົນທີ່ເຄີຍ*
*ນັ່ງຂໍທານນັ້ນຫລື?" 9 ບາງຄົນຕອບວ່າ, "ແມ່ນຄົນນັ້ນແຫລະ" ແຕ່ຄົນອື່ນກໍວ່າ, "ບໍ່ແມ່ນແຕ່ລາວເໝືອນຄົນນັ້ນ" ສ່ວນຄົນນັ້ນເອງ*
*ກໍບອກວ່າ, "ເຮົານີ້ແມ່ນຄົນນັ້ນແຫລະ." 10 ເຂົາຈຶ່ງຖາມລາວວ່າ, "ເປັນຢ່າງໃດຕາຂອງເຈົ້າຈຶ່ງມືນອອກໄດ້." 11 ຄົນນັ້ນໄດ້ຕອບ*
*ວ່າ, "ຊາຍຄົນນຶ່ງຊື່ວ່າ ເຢຊູ ໄດ້ເຮັດຂີ້ຕົມທາຕາຂອງເຮົາແລ້ວບອກເຮົາວ່າ 'ຈົ່ງໄປລ້າງທີ່ສະຊີໂລອາມ' ເຮົາຈຶ່ງໄປລ້າງ ແລ້ວກໍໄດ້*
*ເຫັນຮຸ່ງມາ."*

ເວລາສໍາລັບພຣະເຢຊູທີ່ຈະບໍ່ພຽງແຕ່ປະກາດວ່າພຣະອົງຊົງເປັນຄວາມສວ່າງຂອງໂລກ, ແຕ່ເພື່ອສະແດງມັນໃຫ້ເຫັນຕໍ່ຜູ້ຊາຍຕາບອດນີ້ແລະກັບບັນດາສາວົກຂອງພຣະອົງທີ່ກໍາລັງຈະເກີດຂຶ້ນ. ມາຮອດຈຸດນີ້, ຊີວິດຂອງຜູ້ຊາຍຄົນນີ້ໄດ້ຖືກກໍານົດໂດຍຄວາມມືດ. ແນວຄວາມຄິດຂອງແສງສວ່າງແມ່ນສິ່ງທີ່ລາວບໍ່ເຂົ້າໃຈແຕ່ພຣະອົງຜູ້ຊົງສ້າງແສງສວ່າງກໍາລັງຈະຊົງປະທານຄວາມສາມາດໃຫ້ຊາຍຜູ້ນີ້ໄດ້ສໍາຜັດແສງສວ່າງແລະມອງເຫັນແສງທັງໝົດໃນຄາວດຽວກັນ. ພຣະເຢຊູບໍ່ພຽງແຕ່ປະກາດໃຫ້ຊາຍຄົນນີ້ມອງເຫັນ(ຕາແຈ້ງ) ເທົ່ານັ້ນ

ແຕ່ພຣະອົງຍັງຊົງໃຫ້ຊາຍຄົນນີ້ເປັນຕົວຢ່າງໃຫ້ບັນດາເຫຼົ່າສາວົກແລະຕົວລາວເອງໃຫ້ໄດ້ເຫັນເຖິງວຽກງານແລະສິດທິອຳນາດຂອງພຣະອົງ. ດັ່ງນັ້ນ, ເມື່ອອົງພຣະເຢຊູໄດ້ເລີ້ມປະສົມດິນແລະຂີ້ຕົມເຂົ້າກັນແລ້ວ, ແລະຖູໃສ່ຕາຂອງຊາຍຜູ້ນັ້ນ(ຂໍ້ 6), ພຣະອົງບໍ່ພຽງແຕ່ໃຊ້ບາງ "ເຄັດລັບຊີວິດ"("life hack") ບາງຢ່າງເພື່ອກຳຈັດຄວາມຕາບອດ. ວາລະສານ(ໜັງສື)ການແພດຂອງຊາວຢິວແນ່ນອນຈະບໍ່ໄດ້ຮັບຮອງວິທີການນີ້ເພື່ອປິ່ນປົວຕາບອດ. ມັນເປັນເຣື່ອງງ່າຍໃນວັດທະນະທັມຂອງພວກເຮົາໃນປະຈຸບັນທີ່ຈະເອົາໃຈໃສ່ກັບດິນດິນແລະຕົມແທນທີ່ຈະເປັນພຣະອົງຜູ້ຊົງຢຽວຢາຮັກສາໃຫ້ຫາຍ. ແທນທີ່, ຂີ້ຕົມຈະເປັນສັນຍາລັກທັງສອງ, ຮວມທັງກັບການອອກຄຳໃຫ້ປະຕິບັດ(ເຮັດ). ດັ່ງນັ້ນ, ເມື່ອອົງພຣະເຢຊູໄດ້ຊົງສຳເລັດເອົາຕົມໃສ່ຕາຊາຍຕາບອດ, ພຣະອົງໄດ້ຊົງຮຽກຊາຍຄົນນັ້ນໃຫ້ຕອບສນອງດ້ວຍຄວາມເຊື່ອ: "ຈົ່ງໄປລ້າງເສັຽທີ່ສະຊີໂລອາມ" ຊຶ່ງແປວ່າ "ໃຊ້ໄປ" (ຂໍ້ 7ກ). ການກະທຳແລະຄຳເວົ້າໄດ້ປະໄວ້ຄວາມປະທັບໃຈທີ່ໂຢຮັນຕ້ອງການເຕືອນຜູ້ອ່ານກ່ຽວກັບຄຳນິຍາມຂອງຊື່ຂອງສະຖານທີ່. ການອ້າງອີງນີ້ຊີ້ໃຫ້ເຫັນເຖິງບໍ່ພຽງແຕ່ສະຖານທີ່ເທົ່ານັ້ນແຕ່ຈຸດປະສົງນຳອີກ. ຈຸດປະສົງຂອງການສະເດັດມາຂອງອົງພຣະເຢຊູແມ່ນວ່າ: ພຣະອົງຊົງໄດ້ຖືກສົ່ງມາໂດຍພຣະເຈົ້າພຣະບິດາເພື່ອເຮັດພັນທະກິດຂອງພຣະເຈົ້າໃຫ້ສຳເລັດ(ຢຮ 8:42). ຍິ່ງໄປກວ່ານັ້ນ, ການຕອບໂຕ້ຂອງຊາຍຕາບອດສະແດງໃຫ້ເຫັນຄວາມເຊື່ອແລະຄວາມເຊື່ອຟັງຂອງລາວ. ມັນຕ້ອງອາສັຍຄວາມເຊື່ອທີ່ຜູ້ຊາຍຕາບອດຄົນນີ້ທີ່ຈະວາງໃຈໃນວິທີທີ່ອົງພຣະເຢຊູຈະຊົງໃຊ້ເພື່ອຟື້ນຟູສາຍຕາຂອງລາວ. ຄວາມເຊື່ອຂອງຊາຍຕາບອດໄດ້ຮັບການຢືນຢັນເມື່ອລາວ "ອອກໄປ, ຊຳລະລ້າງ, ແລະກັບຄືນມາມອງເຫັນໄດ້ອີກ" (ຂໍ້ 9:7ຂ). ນັ້ນຄືການຟື້ນຟູສາຍຕາຂອງຊາຍຄົນນີ້ທີ່ຜູ້ຄົນມີຄວາມຫຍຸ້ງຍາກໃນການຮັບຮູ້ລາວ(ຂໍ້ 8-9). ການຫັນປ່ຽນທັງໝົດໄດ້ນຳເອົາບຸກຄົນທີ່ຢາກຮູ້ຢາກເຫັນຫຼາຍຂຶ້ນ(ຂໍ້ 10). ການຕອບສນອງຂອງການປິ່ນປົວຢ່າງຈະແຈ້ງໂດຍພຣະເຢຊູແມ່ນສິ່ງນຶ່ງທີ່ພວກເຮົາທຸກຄົນຄວນຈື່ຈຳ, ເພາະວ່າມັນຮຽກເອີ້ນໃຫ້ພວກເຮົາແບ່ງປັນໃນພະຍານດຽວກັນ. ຊາຍຜູ້ນີ້ເຂົ້າໃຈຊີວິດຂອງລາວແທ້ໆກ່ອນທີ່ລາວໄດ້ພົບພຣະເຢຊູ, ພຣະເຢຊູຊົງໄດ້ປ່ຽນຊີວິດຂອງລາວແນວໃດ, ແລະຊີວິດໃໝ່ຂອງລາວໃນອົງພຣະຄຣິດ. ຢ່າງໃດກໍ່ຕາມ, ມັນເປັນສິ່ງສຳຄັນທີ່ຈະເຂົ້າໃຈວ່າຜູ້ຊາຍຄົນນີ້ຈະບໍ່ກັບມາອາສັຍຢູ່ໃນການຕາບອດອີກຕໍ່ໄປ. ແນ່ນອນ, ລາວຈະເຮັດບາບ. ຕາຂອງລາວຈະສັມຜັດກັບສິ່ງທີ່ລາວບໍ່ເຄີຍເຫັນມາກ່ອນແລະການເຊື່ອຟັງຂອງລາວແມ່ນເປັນວິຖີຊີວິດ, ບໍ່ພຽງແຕ່ເປັນເຫດການຄັ້ງນຶ່ງຄັ້ງດຽວ. ພຣະເຢຊູຊົງມີພຣະປະສົງທີ່ຈະຂະຍາຍພຣະຄຸນບໍ່ວ່າສາເຫດຂອງຄວາມຕາບອດຈະແມ່ນຫຍັງກໍ່ຕາມ. ມີພຣະຄຸນທີ່ມີໃຫ້ແກ່ທຸກຄົນທີ່ເອີ້ນຫາພຣະນາມຂອງພຣະເຈົ້າ(ໂຣມ 10:13). ພວກເຮົາທຸກຄົນມີຄວາມຕາບອດທາງຈິດວິນຍານທີ່ຮ້າຍແຮງກວ່າບັນຫາທາງກາຍໃດໆ ແລະສະແດງໃຫ້ພວກເຮົາເຫັນວ່າ: <u>ວິທີຮັກສາດຽວເທົ່ານັ້ນຄືຄວາມສັມພັນສ່ວນຕົວກັບອົງພຣະເຢຊູຄຣິດ</u>. ນອກຈາກນີ້, ພວກເຮົາຍັງຖືກຮຽກເອີ້ນໃຫ້ສະແດງຄວາມເຊື່ອດຽວກັນກັບຊາຍຄົນນີ້ເມື່ອພຣະຄຸນໄດ້ຖືກສົ່ງອອກມາສູ່ພວກເຮົາ(ອຟຊ 2:8-9). <u>ຄວາມເຊື່ອແມ່ນເຊື່ອວ່າອົງພຣະເຢຊູຊົງເປັນຜູ້ໃດແລະພຣະອົງຊົງສາມາດເຮັດຫຍັງ</u>. ພຣະເຢຊູແມ່ນພຣະອົງຜູ້ຊົງເປີດຕາຂອງພວກເຮົາໃຫ້ເຫັນແຈ້ງດີ.

*ມີວິທີທາງໃດແດ່ ທີ່ອົງພຣະເຢຊູຊົງເປີດຕາຂອງພວກເຮົາໃຫ້ມອງເຫັນ?*

### 3. <u>ໂຢຮັນ 9:30-33</u>

*30 ຊາຍນັ້ນຕອບເຂົາວ່າ, "ນີ້ກໍເປັນໜ້າປລາດແທ້ທີ່ພວກທ່ານບໍ່ຮູ້ວ່າທ່ານຜູ້ນັ້ນມາແຕ່ໃສ, ແຕ່ເພິ່ນຍັງໄດ້ປືດຕາຂອງຂ້ານ້ອຍ. 31*
*ພວກເຮົາຮູ້ຢູ່ວ່າພຣະເຈົ້າບໍ່ຊົງຟັງຄົນບາບ ແຕ່ຖ້າຜູ້ໃດຢຳເກງພຣະເຈົ້າ ແລະເຮັດໄປຕາມນ້ຳພຣະທັຍຂອງພຣະອົງ ພຣະອົງກໍຊົງຟັງ*
*ຜູ້ນັ້ນ. 32 ຕັ້ງແຕ່ເດີມມີໂລກມາບໍ່ທ່ອນໄດ້ຍິນວ່າມີຜູ້ໃດ ໄດ້ປືດຕາຂອງຄົນທີ່ເປັນຕາບອດແຕ່ກຳເນີດໄດ້. 33 ຖ້າທ່ານຜູ້ນັ້ນບໍ່ໄດ້ມາ*
*ຈາກພຣະເຈົ້າ ແລ້ວກໍບໍ່ສາມາດຈະເຮັດສິ່ງນັ້ນໄດ້."*

ຜູ້ຊາຍທີ່ໄດ້ຮັບສາຍຕາຂອງລາວໄດ້ສັ່ນສະເທືອນໂລກຂອງບັນດາພວກຟາຣີຊາຍແລະຝູງຊົນຜູ້ທີ່ເປັນພຍານເຖິງການປ່ຽນແປງຂອງລາວ. ແຕ່ມັນບໍ່ແມ່ນພຽງແຕ່ການຫັນປ່ຽນທາງຮ່າງກາຍເທົ່ານັ້ນ, ຜູ້ຊາຍຄົນນີ້ໄດ້ຮັບສາຍຕາທາງຈິດວິນຍານອີກດ້ວຍ. ຄຳພຍານຂອງຊາຍຄົນນີ້ໄດ້ເຮັດໃຫ້ບັນດາພວກຟາຣີຊາຍດຶງລາວອອກໄປເພື່ອຖາມລາວ(ຂໍ້ 15-17, 24-29); ພວກເພິ່ນຍັງໄດ້ພາພໍ່ແມ່ຂອງລາວມາເປັນພຍານວ່າລາວຕາບອດແທ້ຫຼືບໍ່?(ຂໍ້ 19-23). ການສອບຖາມຂອງພວກຟາຣີຊາຍເຮັດໃຫ້ມີຄວາມສັບສົນຫຼາຍຂຶ້ນແລະ

ຄວາມສັບສົນບໍ່ໄດ້ເຮັດໃຫ້ພວກເພິ່ນຄົ້ນຫາວ່າພຣະເຢຊູຊົງແມ່ນໃຜ. ບັນດາພວກຟາຣີຊາຍໄດ້ຊີ້ບອກອີກເທື່ອນຶ່ງເຖິງວິທີທີ່ຊາຍຄົນນີ້ເປັນກ່ອນທີ່ຈະພົບພຣະຄຣິດ, ແລະໃນສາຍຕາຂອງພວກເພິ່ນບໍ່ມີຫຍັງປ່ຽນແປງ(ຂໍ້ 31,34) ການຕອບສນອງຂອງພວກເຂົາເຈົ້າໄດ້ກາຍເປັນທາງດ້ານຮ່າງກາຍຈົນເຖິງການຂັບໄລ່ລາວອອກຈາກບໍລິເວນພຣະວິຫານ, ສະຖານທີ່ ທີ່ລາວບໍ່ໄດ້ຮັບອະນຸຍາດໃຫ້ນະມັສການຕັ້ງແຕ່ເກີດມາຍ້ອນຄວາມພິການຂອງລາວ. ຕໍ່ມາ, ພວກເຮົາເຫັນວ່າພຣະເຢຊູຊົງໄດ້ພົບຊາຍຄົນນັ້ນຫຼັງຈາກຖືກຖືວ່າເປັນຄົນນອກກຸ່ມ(outcast) ແລະໄດ້ຊົງສຳແດງໃຫ້ລາວເຫັນທັມມະຊາດທີ່ແທ້ຈິງຂອງພຣະອົງ(ຂໍ້ 35-38). ເມື່ອພຣະເຢຊູຊົງຖາມລາວວ່າລາວເຊື່ອຫຼືບໍ່, ພຣະອົງຊົງຢືນຢັນວ່າ: "ເຮົາໄດ້ມາໃນໂລກນີ້ເພື່ອການຕັດສິນເພື່ອວ່າຄົນຕາບອດຈະເຫັນຮຸ່ງແລະເພື່ອວ່າຜູ້ທີ່ເຫັນຮຸ່ງຈະກາຍເປັນຄົນຕາບອດ" (ຂໍ້ 39). **ຂໍໃຫ້ພວກເຮົາເປັນຄືກັບຄົນຕາບອດທີ່ເຫັນໄດ້ຫຼາຍກວ່າພວກຟາຣີຊາຍທີ່ຕາບອດແທ້ໆ!**

*ພວກເຮົາອາດຈະສ່ຽງໃນທາງໃດແດ່ທີ່ຈະມີທັສນະຄະຕິທີ່ຜິດກ່ຽວກັບພຣະເຈົ້າ ຖ້າພວກເຮົາບໍ່ເຝົ້າເບິ່ງພຣະເຢຊູ?*

*ເຮົາໄດ້ບົດຮຽນຫຍັງແດ່ຈາກສັນຍາລັກ(ໝາຍສຳຄັນ)ທີ່ທຳນີ້ຂອງພຣະເຢຊູ?*

## ນຳໃຊ້ໃນຊີວິດ

ມີພຽງແຕ່ຜ່ານອົງພຣະເຢຊູເທົ່ານັ້ນທີ່ພວກເຮົາສາມາດເຫັນໄດ້ຢ່າງແທ້ຈິງ. ຈົ່ງໃຊ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ເຊື່ອຟັງ.** ເຊັ່ນດຽວກັບຊາຍຄົນນີ້ໄດ້ເຕີບໂຕໃນສາຍຕາທາງວິນຍານຂອງລາວໂດຍການເຊື່ອຟັງ, ຈົ່ງພິຈາລະນາຂົງເຂດທີ່ອາດເປັນ "ຈຸດບອດ"(blind spots)ສຳລັບທ່ານ. ຈົ່ງທູນຂໍໃຫ້ພຣະເຈົ້າຊົງເຮັດໃຫ້ທ່ານຮູ້, ເພື່ອທ່ານຈະສາມາດເຊື່ອຟັງໄດ້. ຂໍໃຫ້ທ່ານມີຄວາມຮັບຜິດຊອບຈາກສະມາຊິກໃນກຸ່ມເພື່ອຊ່ວຍໃຫ້ທ່ານເຕີບໂຕໃນຂົງເຂດໂດຍສະເພາະນີ້ ໃນເມື່ອທ່ານຮູ້ແລ້ວ.
- **ເປັນພຍານ.** ແບ່ງປັນພຍານສ່ວນຕົວຂອງທ່ານກ່ຽວກັບຊີວິດຂອງທ່ານກ່ອນຮູ້ຈັກກັບພຣະຄຣິດ, ວິທີທີ່ທ່ານມາວາງໃຈໃນພຣະຄຣິດ, ແລະຊີວິດຂອງທ່ານຕັ້ງແຕ່ນັ້ນມາກັບຄົນທີ່ບໍ່ເຊື່ອພຣະເຈົ້າ. ທ້າຍທີ່ສຸດ, ຄັ້ງນຶ່ງທ່ານເຄີຍຕາບອດ, ແຕ່ຕອນນີ້ທ່ານໄດ້ເຫັນແລ້ວ.
- **ຮັບໃຊ້.** ໃຊ້ເວລາພິຈາລະນາວິທີທີ່ທ່ານສາມາດມີສ່ວນຮ່ວມ ແລະການສນັບສນຸນຄອບຄົວ ຫຼືບຸກຄົນທີ່ພິການໄດ້ຢ່າງໃດ? ຈົ່ງສະແດງຄວາມຮັກຂອງອົງພຣະເຢຊູ ເໝືອນດັ່ງພຣະຜູ້ໄຖ່ໃຫ້ລອດພົ້ນໄດ້ຊົງກະທຳ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**